Fuels Stations Reg 01/3.3.09

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

======****======

ກະຊວງ ອຸດສາຫະກຳ ແລະການຄ້າ

ເລກທີ 1806 / ອຄ.ຄພນ

ນະຄອນຫຼວງວຽງຈັນ, ວັນທີ: 08 SEP 2009

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງປ້ຳຂາຍຍ່ອຍ
# ນ້ຳມັນເຊື້ອໄຟຢູ່ ສປປລາວ

- ອີງຕາມ ກົດໝາຍອາຍາ, ສະບັບປັບປຸງ ເລກທີ12 / ສພຊ, ລົງ ວັນທີ 10/11/05.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 206 / ນຍ, ລົງວັນທີ 10/10/01, ວ່າດ້ວຍ ທຸລະກິດຈຳໜ່າຍສິນຄ້າ.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 207 /ນຍ, ລົງວັນທີ11/10/01, ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 188 /ນຍ, ລົງວັນທີ17/08/06, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະການຄ້າ.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງ ອຸດສາຫະກຳ ແລະການຄ້າ, ສະບັບ ເລກທີ 1785/ ອຄ. ຄພນ; ລົງວັນທີ 07/ 9 / 2009, ວ່າດ້ວຍການຄຸ້ມຄອງທຸລະກິດນຳເຂົ້າ ແລະບໍລິການຂາຍຍົກນ້ຳມັນເຊື້ອໄຟ.

ລັດຖະມົນຕີວ່າການກະຊວງ ອຸດສາຫະກຳ ແລະການຄ້າ ອອກຂໍ້ຕົກລົງດັ່ງນີ້ :

## <u>ໝວດທີ I</u>
## ຫຼັກການທົ່ວໄປ

### ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ວາງອອກ ເພື່ອກຳນົດການອະນຸຍາດສ້າງຕັ້ງ ແລະຄຸ້ມຄອງປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ ໃນ ສປປ ລາວ ໃຫ້ເຂົ້າສູ່ຄວາມເປັນລະບຽບຮຽບຮ້ອຍ, ປະຕິບັດຕາມລະບຽບການຕ່າງໆ ທີ່ວາງອອກໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມມາດຕະຖານເຕັກນິກ, ຮັບປະກັນການບໍລິການ ໃຫ້ແກ່ສັງຄົມ ກໍຄືຜູ້ຊົມໃຊ້ ໃຫ້ມີຄວາມສະດວກ ແລະ ປອດໄພ ພ້ອມທັງຊຸກຍູ້ ແລະສົ່ງເສີມຜູ້ດຳເນີນທຸລະກິດ ໃຫ້ກາຍເປັນສ່ວນໜຶ່ງ ໃນການປະກອບສ່ວນສ້າງສາພັດທະນາປະເທດຊາດ.

ມາດຕາ 2. ອະທິບາຍຄໍາສັບ

ຄໍາສັບຕ່າງໆ ທີ່ນໍາໃຊ້ໃນລະບຽບການສະບັບນີ້ ມີຄວາມໝາຍດັ່ງນີ້:

- ຜູ້ດໍາເນີນທຸລະກິດນໍ້າມັນເຊື້ອໄຟ ໝາຍເຖິງ ບຸກຄົນ ຫຼືນິຕິບຸກຄົນ ທີ່ດໍາເນີນທຸລະກິດກ່ຽວກັບການນໍາເຂົ້ານໍ້າມັນເຊື້ອໄຟ, ປໍ້າ ຫຼືຕົວແທນຈໍາໜ່າຍນໍ້າມັນເຊື້ອໄຟ.
- ນໍ້າມັນເຊື້ອໄຟ ໝາຍເຖິງ ນໍ້າມັນແອັດຊັງພິເສດ, ແອັດຊັງທໍາມະດາ, ກາຊວນ ແລະອື່ນໆ.
- ປໍ້າ ຫຼືຕົວແທນຈໍາໜ່າຍ ໝາຍເຖິງ ປໍ້າຂອງບໍລິສັດນໍ້າມັນເຊື້ອໄຟ ຫຍີ່ຫໍ້ໃດໜຶ່ງ ທີ່ເຮັດໜ້າທີ່ບໍລິການຂາຍນໍ້າມັນ ໃຫ້ແກ່ຜູ້ຊົມໃຊ້ ກໍຄື ສັງຄົມ.
- ພະແນກ ອຸດສາຫະກໍາ ແລະການຄ້າ ໝາຍເຖິງ ພະແນກ ອຸດສາຫະກໍາ ແລະການຄ້າ ຂັ້ນແຂວງ, ນະຄອນຫຼວງ ທີ່ຕັ້ງຢູ່ທ້ອງຖິ່ນ.

ມາດຕາ 3. ຫຼັກການພື້ນຖານໃນການສ້າງຕັ້ງ ແລະການເຄື່ອນໄຫວທຸລະກິດປໍ້າຂາຍຍ່ອຍນໍ້າມັນເຊື້ອໄຟ

ນໍ້າມັນເຊື້ອໄຟເປັນສິນຄ້າຍຸດທະສາດ ທີ່ລັດຄວບຄຸມ, ເປັນປັດໃຈພື້ນຖານໃຫ້ແກ່ການຜະລິດ, ການພັດທະນາພື້ນຖານໂຄງລ່າງ ແລະເສດຖະກິດຂອງຊາດໂດຍລວມ, ຊຶ່ງຈໍາເປັນຕ້ອງມີການຄຸ້ມຄອງ ແລະດັດສົມຂອງລັດ ບົນພື້ນຖານກົນໄກເສດຖະກິດຕະຫຼາດ. ສະນັ້ນ, ການສ້າງຕັ້ງ ແລະການເຄື່ອນໄຫວດໍາເນີນທຸລະກິດ ກ່ຽວກັບ ປໍ້າຂາຍຍ່ອຍນໍ້າມັນເຊື້ອໄຟ ຢູ່ ສປປ ລາວ ຕ້ອງປະຕິບັດຢ່າງເຂັ້ມງວດ ຕາມຂໍ້ຕົກລົງສະບັບນີ້ ແລະລະບຽບ, ກົດໝາຍອື່ນໆທີ່ກ່ຽວຂ້ອງ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

ມາດຕາ 4. ຂອບເຂດການນໍາໃຊ້

ຂໍ້ຕົກລົງສະບັບນີ້ວາງອອກ ເພື່ອນໍາໃຊ້ຕໍ່ບຸກຄົນ ຫຼືນິຕິບຸກຄົນ ທີ່ດໍາເນີນທຸລະກິດ ກ່ຽວກັບການບໍລິການຈໍາໜ່າຍນໍ້າມັນເຊື້ອໄຟ ຢູ່ ສປປ ລາວ.

## ໝວດທີ II

## ມາດຖານ ແລະເງື່ອນໄຂໃນການສ້າງຕັ້ງ ແລະການເຄື່ອນໄຫວ ດໍາເນີນທຸລະກິດຂອງປໍ້າຂາຍຍ່ອຍນໍ້າມັນເຊື້ອໄຟ

ມາດຕາ 5. ມາດຖານ ແລະເງື່ອນໄຂໃນການສ້າງຕັ້ງປໍ້າຂາຍຍ່ອຍນໍ້າມັນເຊື້ອໄຟ

ບຸກຄົນ ຫຼືນິຕິບຸກຄົນ ທີ່ມີຈຸດປະສົງ ສ້າງຕັ້ງປໍ້າຂາຍຍ່ອຍນໍ້າມັນເຊື້ອໄຟຢູ່ ສປປ ລາວ ຈະແມ່ນໃນຮູບການໃດກໍ່ຕາມ ຕ້ອງມີເງື່ອນໄຂຄົບຖ້ວນດັ່ງນີ້:

5.1. ຕ້ອງມີທຶນຈົດທະບຽນ ຢ່າງໜ້ອຍ 500 ລ້ານກີບ ຂຶ້ນໄປ ຕໍ່ໜຶ່ງປໍ້າ;

5.2. ປະຕິບັດຕາມມາດຕະຖານເຕັກນິກ ຂອງກະຊວງໂຍທາທິການ ແລະຂົນສົ່ງ ແລະຂອງຂະແໜງການອື່ນໆ ທີ່ກ່ຽວຂ້ອງ ທີ່ປະກາດໃຊ້ໃນແຕ່ລະໄລຍະ;

5.3. ໄດ້ຮັບສິດເປັນຕົວແທນຈໍາໜ່າຍ ຫຼືປໍ້າຈໍາໜ່າຍໃຫ້ແກ່ບໍລິສັດນໍ້າມັນເຊື້ອໄຟໃດໜຶ່ງ;

5.4. ປໍ້າຈໍາໜ່າຍນໍ້າມັນໜຶ່ງປໍ້າມີສິດເປັນຕົວແທນຈໍາໜ່າຍໄດ້ພຽງແຕ່ຍີ່ຫໍ້ໜຶ່ງເທົ່ານັ້ນ ຫຼືເປັນຕົວແທນໃຫ້

ແກ່ ບໍລິສັດດຽວເທົ່ານັ້ນ;

5.5. ຕ້ອງເປັນຜູ້ ທີ່ມີຄວາມຮູ້ຄວາມສາມາດ ທີ່ແນ່ນອນ ຫຼືກໍລະນີບໍ່ມີ ກໍຕ້ອງໄດ້ຈ້າງວິຊາການ ເພື່ອຊ່ວຍເປັນທີ່ປຶກສາ;

5.6. ກຳນົດຈຸດ ຫຼືສະຖານທີ່ຕັ້ງຂອງປຳ້ນຳ້ມັນ ພ້ອມທັງແຜນຜັງລະອຽດ ກ່ຽວກັບ ລະບົບການບໍລິການ, ເຕັກນິກຮັບ - ຈ່າຍ ນຳ້ມັນ ໂດຍມີການຢັ້ງຢືນ ຈາກອົງການທີ່ກ່ຽວຂ້ອງ;

5.7. ໃບຢັ້ງຢືນກຳມະສິດ ຫຼືມອບກຳມະສິດ ຫຼືເຊົ່າດິນ ບ່ອນທີ່ຈະສ້າງຕັ້ງປຳ້ ໂດຍມີການຮັບຮອງ ຈາກອົງການຈັດຕັ້ງທີ່ກ່ຽວຂ້ອງ ເປັນຕົ້ນ: ສະຖານທີ່ຕັ້ງບໍ່ໃຫ້ມີຜົນກະທົບເຖິງສິ່ງແວດລ້ອມ, ຊຸມຊົນເອອັດ ແລະເຂດຫວງຫ້າມຂອງລັດ;

5.8. ປຳ້ຂາຍຍ່ອຍ ທີ່ມີສັນຍາເປັນຕົວແທນຂອງບໍລິສັດໜຶ່ງ ບໍ່ມີສິດເປັນຕົວແທນໃຫ້ບໍລິສັດອື່ນ ກ່ອນໝົດອາຍຸສັນຍາ ຫຼືກ່ອນໄດ້ຮັບໃບອະນຸຍາດຍົກເລີກສັນຍາ ຈາກບໍລິສັດທີ່ຕົກລົງກັບໃນເບື້ອງຕົ້ນ;

5.9. ປຳ້ຈຳໜ່າຍທຸກປະເພດ ຕ້ອງມີບັ້ງດັບເພີງ (ຊະນິດໂຟມສຳລັບມອດນຳ້ມັນ) ພ້ອມດ້ວຍອຸປະກອນດັບເພີງຄົບຊຸດ ແລະລະບົບຈ່າຍນຳ້ມັນ ຢ່າງພຽງພໍເມື່ອເກີດອັກຄີໄພຕ່າງໆ.

## ມາດຕາ 6. ການຂໍອະນຸຍາດສ້າງຕັ້ງ

ຜູ້ທີ່ມີຈຸດປະສົງ ຢາກສ້າງຕັ້ງປຳ້ຂາຍຍ່ອຍນຳ້ມັນເຊື້ອໄຟ ຢູ່ ສປປ ລາວ ຕ້ອງຍື່ນຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ຕໍ່ຂະແໜງ ອຸດສາຫະກຳ ແລະການຄ້າ ຕາມເງື່ອນໄຂ ໃນການປະກອບເອກະສານດັ່ງນີ້ :

6.1 ເຮັດໃບສະເໜີ ຫຼືຄຳຮ້ອງຂໍອະນຸຍາດສ້າງຕັ້ງປຳ້ນຳ້ມັນ ເຖິງພະແນກ ອຸດສາຫະກຳ ແລະການຄ້າ ບ່ອນທີ່ ຈະສ້າງຕັ້ງປຳ້ (ພ້ອມເອກະສານທີ່ກ່ຽວຂ້ອງຕ່າງໆ ຕາມມາດຕາ5 ຂ້າງເທິງນີ້);

6.2 ຈາກນັ້ນ, ຈຶ່ງລົງເບິ່ງສະຖານທີ່ ທີ່ຈະສ້າງປຳ້ ຫຼືຕົວແທນຈຳໜ່າຍ ໂດຍຮ່ວມກັບຂະແໜງການຕ່າງໆທີ່ກ່ຽວຂ້ອງ;

6.3 ເມື່ອເຫັນວ່າຖືກຕ້ອງຕາມມາດຖານເງື່ອນໄຂແລ້ວ ຈຶ່ງອະນຸຍາດໃຫ້ຂຶ້ນທະບຽນວິສາຫະກິດຕາມລະບຽບການ.

- ພະແນກອຸດສາຫະກຳ ແລະການຄ້າແຂວງ ແລະນະຄອນຫຼວງ ເປັນຜູ້ອອກອະນຸຍາດ ແລະຂຶ້ນທະບຽນວິສາຫະກິດໃຫ້ແກ່ປຳ້ຂາຍຍ່ອຍນຳ້ມັນເຊື້ອໄຟ ບົນພື້ນຖານລະບຽບການສະບັບນີ້ ແລະລະບຽບການອື່ນໆ ທີ່ກ່ຽວຂ້ອງ.

## ມາດຕາ 7. ການເຄື່ອນໄຫວດຳເນີນທຸລະກິດ

ທຸກຫົວໜ່ວຍທຸລະກິດ ທີ່ດຳເນີນທຸລະກິດ ກ່ຽວກັບ ການບໍລິການປຳ້ຂາຍຍ່ອຍນຳ້ມັນເຊື້ອໄຟ ຕ້ອງປະຕິບັດຕາມເງື່ອນໄຂດັ່ງນີ້:

7.1. ນຳ້ມັນເຊື້ອໄຟ ທີ່ບໍລິການຂາຍ ຕ້ອງໄດ້ມາດຕະຖານຄຸນນະພາບ ແລະຖືກຕາມລະບຽບການຂອງອົງການ ວິທະຍາສາດ ແລະເທັກໂນໂລຊີແຫ່ງຊາດ;

7.2 ຕ້ອງຮັບຊື້ນຳ້ມັນຈາກບໍລິສັດແມ່ຂອງຕົນເທົ່ານັ້ນ, ຫ້າມຮັບຊື້ນຳ້ມັນຈາກບໍລິສັດອື່ນທີ່ບໍ່ແມ່ນບໍລິສັດແມ່ຂອງຕົນເອງ;

7.3. ຕ້ອງມີບັນຊີຕິດຕາມການຮັບນຳ້ມັນ ຈາກບໍລິສັດແມ່ ຂອງຕົນຢ່າງລະອຽດ ແລະເປັນລະບົບ;

7.4 ຕ້ອງມີບັນຊີຕິດຕາມ ແລະສະຫຼຸບການຂາຍປະຈຳວັນຂອງຕົນຢ່າງລະອຽດ ແລະເປັນລະບົບ;

7.5. ປະຕິບັດລາຄາຂາຍຍ່ອຍ ແລະກຳນົດເວລາ ຕາມທີ່ລັດກຳນົດໃນແຕ່ລະໄລຍະ;

7.6. ປະຕິບັດກຳນົດເວລາໃນການ ເປີດ ຫຼືປິດ ປ້ຳບໍລິການ ຕາມທີ່ລະບຽບການສະບັບນີ້ໄດ້ກຳນົດຄື:
- ເປີດແຕ່ 6.00 ໂມງເຊົ້າ ເຖິງ 19.00 ໂມງ (ນັບແຕ່ມື້ ວັນຈັນ-ວັນອາທິດ).
- ສະເພາະປ້ຳທີ່ມີເງື່ອນໄຂບໍລິການຕະຫຼອດ 24 ຊົ່ວໂມງ ຕ້ອງມີປ້າຍແຈ້ງບອກ ແລະມີມາດຕະການຄຸ້ມຄອງຮັບປະກັນຄວາມປອດໄພຮອບດ້ານ.

7.7. ປະຕິບັດລະບົບການລາຍງານຂໍ້ມູນຕ່າງໆ ຫຼືໃຫ້ການຮ່ວມມືກັບອົງການມະຫາພາກ ໃນການສະໜອງຂໍ້ມູນຕ່າງໆໄດ້ຢ່າງເປັນລະບົບ;

7.8. ຕ້ອງມີເຄື່ອງແບບໃຫ້ແກ່ພະນັກງານທີ່ຂາຍນ້ຳມັນຢູ່ປ້ຳ ແລະເວລາບໍລິການຂາຍນ້ຳມັນຕ້ອງນຸ່ງເຄື່ອງແບບນັ້ນ, ພະນັກງານຂາຍຕ້ອງມີມາລະຍາດດີ, ມີຄວາມສັດຊື່, ບໍ່ສໍ້ໂກງລູກຄ້າ;

7.9. ປະຕິບັດຢ່າງຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການຕ່າງໆ ທີ່ກ່ຽວຂ້ອງ ໃນການດຳເນີນທຸລະກິດ.

## ໝວດທີ III

## ເງື່ອນໄຂທີ່ຕັ້ງ ແລະພັນທະ ຂອງປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ

ມາດຕາ 8. ທີ່ຕັ້ງຂອງປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ ຫຼື( ປ້ຳບໍລິການ )

8.1. ຕ້ອງເປັນເດີ່ນ ທີ່ຮາບພຽງດີ ມີລັກສະນະກວ້າງຂວາງ, ມີເສັ້ນທາງເຂົ້າ-ອອກໄດ້ງ່າຍ, ສະດວກໃນການຖອກເທນ້ຳມັນ ພ້ອມທັງຮັບປະກັນຄວາມປອດໄພຕ່າງໆອີກດ້ວຍ;

8.2. ຕ້ອງຕິດຕັ້ງປ້າຍເຄື່ອງໝາຍການຄ້າ (ຕົວແທນຂອງບໍລິສັດ) ໃສ່ໃນຈຸດທີ່ສູງ ສາມາດເບິ່ງເຫັນໄດ້ງ່າຍ, ປ້ຳ ໜຶ່ງຕ້ອງມີ ເຄື່ອງໝາຍການຄ້າພຽງຍີ່ຫໍ້ດຽວເທົ່ານັ້ນ;

8.3. ມີຫ້ອງນ້ຳ ຫຼື ສຸຂະພັນ ເພື່ອສະດວກໃຫ້ແກ່ຜູ້ໃຊ້ບໍລິການ;

8.4. ມີຫ້ອງຂາຍສິນຄ້າ (ຖ້າມີເງື່ອນໄຂ);

8.5. ມີທີ່ພັກເຊົາຂອງຜູ້ໂດຍສານ (ຖ້າຈຳເປັນ);

8.6. ປະກອບກັບໃຫ້ມີບໍລິການດ້ານອັດສີດ, ປ່ຽນຖ່າຍນ້ຳມັນເຄື່ອງ, ເຊັກລົມຕີນລົດ ແລະອື່ນໆ (ຖ້າມີເງື່ອນໄຂ).

(ລາຍລະອຽດເຕັກນິກ ຂອງປ້ຳບໍລິການ ແມ່ນໃຫ້ປະຕິບັດ ຕາມລະບຽບການ ກ່ຽວກັບການ ກຳນົດເງື່ອນໄຂອະນຸຍາດມາດຖານເຕັກນິກເລກທີ 568/ຄຂປກ, ລົງວັນທີ 4/07/1991 ຂອງກະຊວງ ຄຂປກ).

ມາດຕາ 9 ພັນທະຂອງປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ

9.1. ການປະຕິບັດລາຄາຂາຍຍ່ອຍນ້ຳມັນເຊື້ອໄຟຫ້າມບໍ່ໃຫ້ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ ເປັນຜູ້ກຳນົດລາຄາຕາມລຳພັງໃຈໂດຍເດັດຂາດ ຖ້າຫາກພົບເຫັນຈະຖືກປະຕິບັດວິໄນຕາມລະບຽບ, ກົດໝາຍ ທີ່ກ່ຽວຂ້ອງຢ່າງເຂັ້ມງວດ;

9.2. ຕ້ອງຕິດປ້າຍລາຄານ້ຳມັນເຊື້ອໄຟແຕ່ລະຊະນິດ ຕາມການປັບປຸງແຕ່ລະຄັ້ງ ໃສ່ທາງໜ້າຂອງປ້ຳນ້ຳມັນ ບ່ອນທີ່ສາມາດເຫັນໄດ້ງ່າຍ ໃນໄລຍະປະມານ 100 ແມັດ ເພື່ອສະດວກແກ່ຜູ້ຊົມໃຊ້;

9.3. ການກວດກາຄຸນນະພາບນ້ຳມັນເຊື້ອໄຟນ້ຳມັນເຊື້ອໄຟ, ນ້ຳມັນທີ່ຈຳໜ່າຍຕ້ອງຮັບປະກັນທັງປະລິມານ ແລະຄຸນນະພາບ ບໍ່ໃຫ້ມີການເຈືອປົນ ແລະປອມແປງ, ຜູ້ຈຳໜ່າຍນ້ຳມັນເຊື້ອໄຟ ຕ້ອງມີເຄື່ອງກວດກາບໍລິມາດນ້ຳມັນ ຢ່າງໜ້ອຍ 01 ເຄື່ອງປະຈຳຢູ່ປ້ຳຂອງຕົນ ເພື່ອກວດກາໃນບາງກໍລະນີດັ່ງນີ້:

- ໃນເວລາມີການປັບລາຄານ້ຳມັນຂຶ້ນ-ລົງໃນແຕ່ລະຄັ້ງ;
- ເມື່ອມີການຮຽກຮ້ອງ ຈາກຜູ້ໃຊ້ບໍລິການ ຂໍໃຫ້ມີການກວດກາ ຫຼືກໍລະນີອື່ນໆ.

9.4. ຮັບປະກັນໃຫ້ມີນ້ຳມັນສຳຮອງໄວ້ ໃນກໍລະນີສຸກເສີນໃຫ້ໄດ້ຢ່າງໜ້ອຍ 02 ວັນ ເພື່ອບໍລິການໃຫ້ແກ່ສັງຄົມຢ່າງເປັນປົກກະຕິ, ບໍ່ໃຫ້ມີປະກົດການປິດປ້ຳ ດ້ວຍເຫດຜົນວ່ານ້ຳມັນໝົດ ຫຼືອື່ນໆ;

9.5. ປະຕິບັດ ພັນທະຕໍ່ງົບປະມານລັດ ຕາມລະບົບ ຢ່າງຄົບຖ້ວນ.

## <u>ໝວດທີ IV</u>

## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະມາດຕະການຕໍ່ຜູ້ທີ່ລະເມີດ

### ມາດຕາ 10. ນະໂຍບາຍ ຕໍ່ຜູ້ທີ່ມີຜົນງານ

ຜູ້ທີ່ເຄື່ອນໄຫວດຳເນີນທຸລະກິດ ການບໍລິການຂາຍຍ່ອຍນ້ຳມັນເຊື້ອໄຟ ຢ່າງຖືກຕ້ອງ ຕາມຂໍ້ຕົກລົງສະບັບນີ້ ກໍຄືລະບຽບການອື່ນໆ ທີ່ກ່ຽວຂ້ອງ ນອກຈາກຈະໄດ້ຮັບການຍ້ອງຍໍຈາກພາກລັດ ແລະສັງຄົມທົ່ວໄປແລ້ວ ຍັງຈະໄດ້ຮັບສິດຜົນປະໂຫຍດຕ່າງໆ ດັ່ງນີ້:

1. ຈະໄດ້ຮັບບູລິມະສິດການພິຈາລະນາ ກ່ຽວກັບ ນະໂຍບາຍຕ່າງໆ ໃນດຳເນີນທຸລະກິດ;
2. ຈະໄດ້ຖືກຈັດເຂົ້າຢູ່ໃນບັນຊີ ຜູ້ປະກອບການທີ່ດີເດັ່ນ ແລະສະເໜີການຍ້ອງຍໍຜ່ານທາງສື່ມວນຊົນ;
3. ຈະໄດ້ຮັບການຍ້ອງຍໍໃນຮູບການຕ່າງໆ ທີ່ເໝາະສົມ.

### ມາດຕາ 11. ມາດຕະການຕໍ່ຜູ້ລະເມີດ

ຖ້າຫາກຜູ້ປະກອບການ ບໍລິການຂາຍຍ່ອຍນ້ຳມັນເຊື້ອໄຟ ຫາກລະເມີດລະບຽບການໃນກໍລະນີຕ່າງໆ ຕ້ອງປະຕິບັດດັ່ງນີ້:

11.1. ການສວຍໂອກາດຂຶ້ນລາຄານ້ຳມັນ

ຜູ້ປະກອບການບໍລິການຂາຍຍ່ອຍນ້ຳມັນເຊື້ອໄຟ ຫາກສວຍໂອກາດຂຶ້ນລາຄານ້ຳມັນ ຫຼືຂາຍນ້ຳມັນເກີນລາຄາທີ່ລັດກຳນົດ ໃນແຕ່ລະໄລຍະ ແລະໃນເວລາມີສະພາບໄພທຳມະຊາດເປັນຕົ້ນ: ໄພແຫ້ງແລ້ງ, ໄພນ້ຳຖ້ວມ ຫຼືໃນເວລາ ທີ່ມີສະພາບຫຍຸ້ງຍາກເກີດຂຶ້ນໃນທ້ອງຖິ່ນໃດໜຶ່ງ ຈະຖືກລົງໂທດຕັດອິດສະຫຼະພາບ ແຕ່ 6 ເດືອນ ຫາ 2 ປີ ແລະຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ ຕໍ່ 1 ຄັ້ງ ( ຕາມມາດຕາ147 ຂອງກົດໝາຍອາຍາ);

11.2. ການກັກຕຸນນ້ຳມັນ

ຜູ້ປະກອບການບໍລິການຂາຍຍ່ອຍນ້ຳມັນເຊື້ອໄຟ ທີ່ເຮັດໜ້າທີ່ບໍລິການໃຫ້ແກ່ສັງຄົມທົ່ວໄປໃດໜຶ່ງ ຫາກໄດ້ກັກຕຸນ, ໄດ້ຊຸກເຊື່ອງນ້ຳມັນໃນປ້ຳຈຳໜ່າຍນ້ຳມັນ ຫຼືຢູ່ບ່ອນອື່ນ ເພື່ອເກັງກຳໄລ ແລະ ສ້າງຄວາມຫຍຸ້ງຍາກໃຫ້ແກ່ສັງຄົມ ຈະຖືກລົງໂທດຕັດອິດສະລະພາບແຕ່ 1 ປີ ຫາ 4 ປີ ແລະຈະຖືກປັບໃໝຕາມລະບຽບການຂອງພາສີ (ຕາມມາດຕາ148 ຂອງກົດໝາຍອາຍາ);

11.3. ການຂາຍນ້ຳມັນບໍ່ຖືກຕ້ອງຕາມລະບຽບການ

ຜູ້ປະກອບການບໍລິການປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ ທີ່ເຮັດໜ້າທີ່ບໍລິການໃຫ້ແກ່ສັງຄົມທົ່ວໄປນັ້ນ, ມີສິດເປັນຕົວແທນຈຳໜ່າຍໄດ້ພຽງແຕ່ ຍີ່ຫໍ້ໜຶ່ງ ຫຼືເປັນຕົວແທນໃຫ້ແກ່ ບໍລິສັດດຽວເທົ່ານັ້ນ, ສະນັ້ນ, ຖ້າມີການຮັບຊື້ນ້ຳມັນຍີ່ຫໍ້ອື່ນ ຫຼືຈາກບໍລິສັດອື່ນ ທີ່ປ້ຳຂອງຕົນບໍ່ໄດ້ເປັນຕົວແທນ ແມ່ນຈະຖືກລົງໂທດຕັດອິດສະຫຼະ ພາບແຕ່ 6 ເດືອນ ຫາ 2 ປີ ແລະຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 10.000.000 ກີບ ຕໍ່1ຄັ້ງ (ຕາມມາດຕາ149 ຂອງກົດໝາຍອາຍາ);

11.4. ການປອມແປງມາດຕາວັດ-ມາດຕາຊັ່ງ ຫຼືວັດແທກຊັ່ງຜອງ

ເມື່ອຜູ້ປະກອບການບໍລິການຂາຍຍ່ອຍນ້ຳມັນເຊື້ອໄຟ ຫາກໄດ້ລັກໂລບການຊັ່ງ, ການຜອງ, ການວັດແທກ ໃນເວລາຊື້ - ຂາຍ, ດັດແປງເຄື່ອງວັດແທກ, ເຄື່ອງຊັ່ງຜອງທີ່ບໍ່ໄດ້ມາດຕະຖານ ເພື່ອຫາຜົນກຳໄລ ດ້ວຍການເອົາປຽບຜູ້ຊົມໃຊ້ ຈະຖືກລົງໂທດ ຕັດອິດສະຫຼະພາບແຕ່ 6 ເດືອນ ຫາ 2 ປີ ແລະຈະຖືກປັບໃໝແຕ່ 100.000 ກີບ ຫາ 3.000.000 ກີບ ຕໍ່1ຄັ້ງ (ຕາມມາດຕາ150 ຂອງກົດໝາຍອາຍາ).

ມາດຕາ 12. ການລະເມີດອື່ນໆ

ບຸກຄົນ ຫຼືນິຕິບຸກຄົນ ທີ່ດຳເນີນທຸລະກິດ ກ່ຽວກັບ ການບໍລິການຂາຍຍ່ອຍນ້ຳມັນເຊື້ອໄຟ ທີ່ລະເມີດຕໍ່ລະບຽບການສະບັບນີ້ ຫາກໄດ້ກໍ່ຄວາມເສຍຫາຍໃຫ້ແກ່ຜູ້ອື່ນ ຕ້ອງຮັບຜິດຊອບ ໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ສ້າງຂຶ້ນ, ໃນກໍລະນີການລະເມີດ ຫາກເປັນການກະທຳຜິດ ທາງອາຍາ ຜູ້ລະເມີດຈະຖືກລົງໂທດຕາມກົດໝາຍອາຍາ, ນອກຈາກໃນກໍລະນີຕ່າງໆ ທີ່ໄດ້ລະບຸໄວ້ໃນມາດຕາ 10 ຂ້າງເທິງນີ້.

ມາດຕາ 13. ມາດຕະການຕໍ່ລັດຖະກອນ ທີ່ກະທຳຜິດຕໍ່ໜ້າທີ່ຮັບຜິດຊອບ

ລັດຖະກອນຜູ້ໃດ ທີ່ກະທຳຜິດຕໍ່ໜ້າທີ່ຮັບຜິດຊອບຂອງຕົນ ຫຼືລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດວິໃນເຊັ່ນ: ສຶກສາ-ອົບຮົມ, ຍົກຍ້າຍໜ້າທີ່, ປົດຕຳແໜ່ງ ຫຼືໄລ່ອອກຈາກ ລັດຖະກອນ, ນອກຈາກນີ້ຍັງຈະໄດ້ປະຕິບັດມາດຕະການອື່ນໆອີກ ຕາມແຕ່ລະກໍລະນີທີ່ໄດ້ລະບຸໄວ້ໃນໝວດທີ່ 8 ຂອງກົດໝາຍອາຍາ.

## ໝວດທີ V

## ການຈັດຕັ້ງປະຕິບັດ

### ມາດຕາ 14. ການຈັດຕັ້ງປະຕິບັດ

ມອບໃຫ້ກົມການຄ້າພາຍໃນ, ພະແນກອຸດສາຫະກຳ ແລະການຄ້າແຂວງ ແລະນະຄອນຫຼວງ ແລະ ຫ້ອງການອຸດສາຫະກຳ ແລະການຄ້າເມືອງ ເປັນຜູ້ປະສານສົມທົບກັບ ທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ ແລະຜັນຂະຫຍາຍຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

### ມາດຕາ 15. ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ລະບຽບການອື່ນໆ ຂອງກະຊວງອຸດສາຫະກຳ ແລະການຄ້າ ທີ່ວາງອອກໃນເມື່ອກ່ອນ ຫາກຂັດກັບລະບຽບການສະບັບນີ້ ລ້ອນແຕ່ຖືກລົບລ້າງ.

ລັດຖະມົນຕີວ່າການ
ກະຊວງອຸດສາຫະກຳ ແລະການຄ້າ.

ດຣ. ນາມ ວິຍະເກດ